**(ບົດຄັດຫຍໍ້)**

# ມະຕິ

# ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ໄດ້ດໍາເນີນຢ່າງເປັນທາງການ ແຕ່ວັນທີ 06-08 ມັງກອນ 2026 ທີ່ນະຄອນຫຼວງວຽງຈັນ ພາຍໃຕ້ຄໍາຂວັນ **"ຍົກສູງບົດບາດການນໍາພາ ທີ່ເຂັ້ມແຂງ ຂອງພັກ, ຕັ້ງໜ້າສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ, ສືບຕໍ່ປົກປັກຮັກສາ ແລະ ພັດທະນາລະບອບປະຊາທິປະໄຕປະຊາຊົນ ໃຫ້ໝັ້ນຄົງ ກ້າວຂຶ້ນສູ່ສັງຄົມນິຍົມ"**.

**ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ມີຄວາມໝາຍສໍາຄັນ ດັ່ງນີ້:**

1. ການເປີດຂຶ້ນ ແລະ ດໍາເນີນກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ເປັນເຫດການການເມືອງ ທີ່ມີຄວາມໝາຍສໍາຄັນອີກບັ້ນໜຶ່ງ ທີ່ບັນທຶກໄວ້ໃນໜ້າປະຫວັດສາດ ຂອງພັກ ແລະ ຂອງຊາດລາວ.

2. ກອງປະຊຸມຄັ້ງນີ້ ໄດ້ທົບທວນຄືນຜົນຂອງການຜັນຂະຫຍາຍມະຕິ ຂອງກອງປະ ຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ກໍານົດແນວທາງ, ນະໂຍບາຍ ແລະ ແຜນປະຕິບັດງານ ຂອງພັກ ແລະ ປະເທດຊາດ ໃນ 5 ປີຕໍ່ໜ້າ, ຍຸດທະສາດພັດທະນາ 10 ປີ, ກໍານົດວິໄສທັດ ຮອດປີ 2055 ເພື່ອສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງການປ່ຽນແປງໃໝ່ ຂອງພັກ ສູ່ລວງເລິກຕໍ່ໆໄປ, ສ້າງບັນດາປັດໄຈ ການປົກປັກຮັກສາ ແລະ ພັດທະນາລະບອບປະຊາທິປະໄຕ ປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ.

3. ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ປະຊາຊົນປະຕິວັດລາວ ຢືນຢັນໄດ້ຢ່າງໜັກແໜ້ນ ຕື່ມອີກວ່າ:

①. ແມ່ນກອງປະຊຸມໃຫຍ່ ທີ່ມີຄວາມສາມັກຄີເປັນເອກະພາບສູງ ຢູ່ພາຍໃນພັກ.

②. ແມ່ນກອງປະຊຸມໃຫຍ່ ແຫ່ງການສືບຕໍ່ຍູ້ແຮງພາລະກິດປ່ຽນແປງໃໝ່ ເຂົ້າສູ່ລວງເລິກ ແລະ ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ.

③. ແມ່ນກອງປະຊຸມໃຫຍ່ ແຫ່ງການເສີມຂະຫຍາຍມານະຈິດປະຕິວັດ ຂອງທົ່ວພັກ.

④. ແມ່ນກອງປະຊຸມໃຫຍ່ ທີ່ເຕັມປ່ຽມໄປດ້ວຍຄວາມຮັບຜິດຊອບການເມືອງອັນສູງສົ່ງ ຂອງພັກ ໃນການຕົກລົງບັນຫາທີ່ສໍາຄັນ ແລະ ເປັນພື້ນຖານ ຂອງພັກ, ຂອງການປະຕິວັດ ແລະ ຊາຕາກໍາ ຂອງປະເທດຊາດ.

⑤. ແມ່ນກອງປະຊຸມໃຫຍ່ ແຫ່ງຄວາມເຊື່ອໝັ້ນ ຕໍ່ການນໍາພາຂອງພັກ ໃນການສືບຕໍ່ກ້າວຂຶ້ນຂອງປະເທດຊາດ, ທົ່ວພັກ ແລະ ທົ່ວປວງຊົນລາວ ຕໍ່ຜົນສໍາເລັດ ຂອງກອງປະຊຸມໃຫຍ່ຄັ້ງນີ້.

ກອງປະຊຸມໃຫຍ່ ໄດ້ດໍາເນີນພາຍໃຕ້ບັນຍາກາດແຫ່ງຄວາມສາມັກຄີເປັນເອກະພາບ, ຄວາມຟົດຟື້ນປະຕິວັດ ແລະ ດ້ວຍຄວາມຮັບຜິດຊອບການເມືອງອັນສູງສົ່ງ ຂອງຜູ້ແທນກອງປະຊຸມໃຫຍ່, ຄຽງຄູ່ກັບຄວາມສົນໃຈ ແລະ ການຕິດຕາມ ຢ່າງໃກ້ຊິດ ຂອງທົ່ວສັງຄົມ.

**ກອງປະຊຸມໃຫຍ່ ໄດ້ຄົ້ນຄວ້າ, ຕົກລົງຮັບຮອງເອົາບັນຫາສໍາຄັນຂອງພັກ ແລະ ຂອງຊາດ ດັ່ງນີ້:**

1. ໄດ້ພິຈາລະນາ ແລະ ຮັບຮອງເອົາໂຄງການການເມືອງ ຂອງພັກ ສະບັບທີ 3 **“ບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ”** ຊຶ່ງມີເນື້ອໃນສຳຄັນຫຼາຍ ໃນນີ້ ໄດ້ກຳນົດບັນດານະໂຍບາຍໃຫຍ່ໆສຳຄັນ.

2. ໄດ້ພິຈາລະນາ ແລະ ເປັນເອກະພາບສູງຮັບຮອງເອົາລາຍງານການເມືອງ ທີ່ໄດ້ຕີລາຄາຢ່າງເລິກເຊິ່ງ, ກົງໄປກົງມາຕໍ່ໝາກຜົນແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃນ 5 ປີ ຜ່ານມາ, ລວມມີທັງຜົນສຳເລັດ, ຂໍ້ຄົງຄ້າງ, ສາເຫດ, ບົດຮຽນທີ່ຖອດຖອນໄດ້ ແລະ ວາງທິດທາງ 2026-2030 ຊຶ່ງກຳນົດແຈ້ງໃນ 10 ຂົງເຂດວຽກງານທີ່ສຳຄັນ.

3. ກອງປະຊຸມໃຫຍ່ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍລັດຖະບານ ທີ່ໄດ້ຕັ້ງໜ້າປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ຍາດໄດ້ຮັບຜົນສຳເລັດເປັນຢ່າງດີ, ພ້ອມນັ້ນ ກໍສະແດງຄວາມເຫັນດີເຫັນພ້ອມ ແລະ ສະໜັບສະໜູນ ແຜນພັດທະນາເສດ ຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ໂດຍສະເພາະ 6 ເປົ້າໝາຍ.

4. ໄດ້ຮັບຮອງເອົາກົດລະບຽບພັກປະຊາຊົນປະຕິວັດລາວ (ສະບັບປັບປຸງ) ເພື່ອໃຫ້ສອດຄ່ອງ, ຮອງຮັບການຈັດຕັ້ງປະຕິບັດແນວທາງການເມືອງ, ຮັບປະກັນຄວາມສາມັກຄີ ເປັນເອກະພາບໃນທົ່ວພັກ; ຍູ້ແຮງວຽກງານກໍ່ສ້າງພັກ, ເຮັດໃຫ້ພັກເຮົາມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ;

5. ໄດ້ພິຈາລະນາ ແລະ ຮັບຮອງເອົາ ບົດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ເຊິ່ງໄດ້ຕີລາຄາສູງ ຕໍ່ຄວາມບາກບັ່ນພະຍາຍາມ ແລະ ຄວາມເປັນເຈົ້າການປະດິດສ້າງໃນການເສີມຂະຫຍາຍມູນເຊື້ອ ແລະ ບົດຮຽນຂອງພັກ ໃນການເພີ່ມທະວີຄວາມສາມັກຄີ ເປັນເອກະພາບສູງພາຍໃນພັກ, ເຊີດຊູຄວາມຮັບຜິດຊອບ ຕໍ່ປະເທດຊາດ ແລະ ປະຊາຊົນ.

6. ໄດ້ຮັບຮອງເອົາບົດລາຍງານກ່ຽວກັບຜົນການເລືອກຕັ້ງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ເຊິ່ງປະກອບດ້ວຍກຳມະການສົມບູນ ຈຳນວນ 73 ສະຫາຍ ແລະ ກຳມະການສຳຮອງ ຈຳນວນ 15 ສະຫາຍ ເພື່ອເປັນແກ່ນສານແຫ່ງຄວາມສາມັກຄີ ແລະ ສະຕິປັນຍາ ຂອງພັກເຮົານຳພາທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ປວງຊົນລາວທັງຊາດ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃຫ້ມີຜົນສຳເລັດຕົວຈິງ.

ກອງປະຊຸມຄົບຄະນະຄັ້ງປະຖົມມະລຶກ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ເປັນເອກະພາບເລືອກຕັ້ງເອົາກຳມະການກົມການເມືອງສູນກາງພັກ ຈຳນວນ 13 ສະຫາຍ; ໄດ້ເລືອກເອົາກຳມະການຄະນະເລຂາທິການສູນກາງພັກ ຈຳນວນ 11 ສະຫາຍ; ກອງປະຊຸມ ໄດ້ເປັນເອກະພາບສູງ ເລືອກເອົາ **ສະຫາຍ ທອງລຸນ ສີສຸລິດ** ເປັນເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ອີກວາລະໜຶ່ງ; ໄດ້ເລືອກເອົາ **ສະຫາຍ ພົອ ວິໄລ ຫຼ້າຄຳຟອງ** ເປັນຜູ້ປະຈຳການຄະນະເລຂາທິການສູນກາງພັກ ແລະ ໄດ້ເລືອກເອົາ **ສະຫາຍ ວັນໄຊ ພອງສະຫວັນ** ເປັນປະທານກວດກາ ແລະ ຮອງປະທານກວດກາ ຈຳນວນ 06 ສະຫາຍ.

ເພື່ອເຮັດໃຫ້ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໄດ້ຮັບການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ໃຫ້ປະກົດຜົນເປັນຈິງ, ກອງປະຊຸມໃຫຍ່ ໄດ້ມອບໝາຍໜ້າທີ່ ໃຫ້ຄະນະບໍລິຫານງານສູນກາງພັກ ກໍຄື ຄະນະພັກທຸກຂັ້ນ ເປັນເຈົ້າການຄົ້ນຄວ້າ, ກຳແໜ້ນ, ເຊື່ອມຊຶມ ແລະ ຜັນຂະ ຫຍາຍ ເປັນແຜນດຳເນີນງານຂອງຕົນ ຢ່າງລະອຽດ, ມີການຕິດຕາມ, ກວດກາ ແລະ ຊຸກຍູ້ການ ຈັດຕັ້ງປະຕິບັດ ໃຫ້ແທດເຖິງ ແລະ ເປັນປະຈຳ ໂດຍມີການນຳພາ-ຊີ້ນຳ ຢ່າງແຂງແຮງ ແລະ ລວມສູນຈາກສູນກາງພັກ.

ກອງປະຊຸມໃຫຍ່ໄດ້ຮຽກຮ້ອງມາຍັງຄະນະພັກທຸກຂັ້ນ, ສະມາຊິກພັກ, ພະນັກງານ, ນັກ ຮົບ, ປະຊາຊົນລາວບັນດາເຜົ່າ, ບັນດາຊັ້ນຄົນ ແລະ ພີ່ນ້ອງຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງ ປະເທດ ຈົ່ງພ້ອມກັນເຊີດຊູນ້ຳໃຈຮັກຊາດ ແລະ ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ, ເສີມຂະ ຫຍາຍມານະຈິດປະຕິວັດ, ປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ ໃຫ້ຈະເລີນຮຸ່ງເຮືອງ ແລະ ກ້າວຂຶ້ນຕາມຈຸດໝາຍ ທີ່ວາງໄວ້ ຢ່າງມີໄຊ.